Empowered lives.
Resilient nations.

# ບົດຂ່າວ

## ຮ່ວມມືກັນເພື່ອຮັບປະກັນໃຫ້ທຸກຊີວິດມີຄວາມປອດໄພຈາກລະເບີດບໍ່ທັນແຕກ

**ສປປ ລາວ ໄດ້ລາຍງານຄວາມຄືບໜ້າຕໍ່ປະຊາຄົມໂລກ ກ່ຽວກັບການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ເປົ້າໝາຍທີ 18: "ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ" ໃນລະຫວ່າງກອງປະຊຸມເວທີການເມືອງລະດັບສູງ ຢູ່ທີ່ນິວຢອກ**

***ວຽງຈັນ/ນິວຢອກ, 17 ກໍລະກົດ 2018*** – ງານລະດັບສູງທີ່]ມີຫົວຂໍ້ງານວ່າ ເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ເປົ້າໝາຍທີ 18 "ຊີວິດທີປອດໄພຈາກລະເບີດບໍ່ທັນແຕກ ສໍາລັບການພັດທະນາໃນ ສປປ ລາວ", ເຊິ່ງເປັນເຈົ້າພາບໂດຍລັດຖະບານແຫ່ງ ສປປ ລາວ ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ (ຢູເອັນດີພີ), ໄດ້ຖືກຈັດຂຶ້ນໃນລະຫວ່າງກອງປະຊຸມເວທີການເມືອງລະດັບສູງ ຢູ່ທີ່ນິວຢອກ. ໃນເດືອນກັນຍາ 2016, ສປປ ລາວ ເປັນປະເທດທໍາອິດໃນໂລກທີ່ປະກາດເລີ່ມຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ເຊິ່ງເອີ້ນວ່າ ເປົ້າໝາຍອັນດັບທີ 18 "ຊີວິດທີປອດໄພຈາກລະເບີດບໍ່ທັນແຕກ" ຢ່າງເປັນທາງການ ໂດຍການເຂົ້າຮ່ວມຂອງພະນະທ່ານ ທອງລຸນ ສີສຸລິດ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ແລະ ທ່ານບັນ ຄີມູນ, ເລຂາທິການໃຫຍ່ຂອງອົງການສະຫະປະຊາຊາດ.

ງານນີ້ ໂດຍພາຍໃຕ້ການເປັນປະທານຂອງທ່ານລັດຖະມົນຕີກະຊວງການຕ່າງປະເທແຫ່ງ ສປປ ລາວ ໄດ້ສະໜອງການລາຍງານຄວາມຄືບໜ້າໃນການສໍາຫຼວດ ແລະ ການເກັບກູ້, ການໂຄສະນາສຶກສາຄວາມສ່ຽງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ. ງານດັ່ງກ່າວໄດ້ສະແດງໃຫ້ເຫັນວ່າ ລັດຖະບານ ໂດຍການຮ່ວມມືກັບອົງການຢູເອັນດີພີ ແລະ ຄູ່ຮ່ວມພັດທະນາອື່ນໆ ໄດ້ເຮັດວຽກຮ່ວມກັນແນວໃດ ເພື່ອປະຕິບັດພັນທະ ຕາມມາດຕາ 4 ແລະ 5 ຂອງສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ.

ໃນການກ່າວມີຄໍາເຫັນເປີດງານ, **ພະນະທ່ານ ສະເຫຼີມໄຊ ກົມມະສິດ, ລັດຖະມົນຕີກະຊວງການຕ່າງປະເທດ** ໄດ້ກ່າວວ່າ: "*ສປປ ລາວ ເປັນປະເທດທີ່ໄດ້ຮັບຜົນກະທົບທີ່ໜັກໜ່ວງທີ່ສຸດຈາກລະເບີດລູກຫວ່ານຕໍ່ຫົວຄົນ ເຊິ່ງສົ່ງຜົນໃຫ້ເກີດມີການບາດເຈັບ ແລະ ເສຍຊີວິດເປັນຈໍານວນຫຼາຍ. ລະເບີດບໍ່ທັນແຕກຕົກຄ້າງ ໄດ້ສືບຕໍ່ສົ່ງຜົນກະທົບຕໍ່ການພັດທະນາແຫ່ງຊາດ ເຊັ່ນຈໍາກັດການນໍາໃຊ້ທີ່ດິນສໍາລັບກະສິກໍາ, ເຮັດໃຫ້ການກໍ່ສ້າງພື້ນຖານໂຄງລ່າງໃຊ້ງົບປະມານສູງ ແລະ ມີອັນຕະລາຍ ແລະ ຖ່ວງດຶງການພັດທະນາ. ສະນັ້ນ, ເປົ້າໝາຍການພັດທະນາແບບຍືນຍົງ ອັນດັບທີ 18 ຈຶ່ງເປັນໜຶ່ງໃນເປົ້າໝາຍບຸລິມະສິດອັນດັບຕົ້ນໆຂອງ ສປປ ລາວ.*"

ໂດຍມີຄວາມມຸ່ງໝັ້ນໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ເປົ້າໝາຍທີ 18 ເຊິ່ງເປັນສ່ວນໜຶ່ງຂອງວາລະປີ 2030 ຂອງສາກົນ ເພື່ອການພັດທະນາແບບຍືນຍົງ, ສປປ ລາວ ໂດຍການຮ່ວມມື ແລະ ການສະໜັບສະໜຸນຂອງຄູ່ຮ່ວມ

ພັດທະນາ ໄດ້ຕັ້ງໜ້າໃນການຫຼຸດຜ່ອນຜົນກະທົບຈາກລະເບີດບໍ່ທັນແຕກ ແລະ ການປະກອບສ່ວນຕໍ່ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາອື່ນໆ.

ພາຍໃຕ້ການນໍາພາຂອງລັດຖະບານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ແລະ ຄູ່ຮ່ວມພັດທະນາ ໄດ້ຮ່ວມມືກັນສະໜັບສະໜູນສະຖາບັນຕ່າງໆໃນການເກັບກູ້ລະເບີດບໍ່ທັນແຕກ ໂດຍການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ, ການຝຶກອົບຮົມພະນັກງານກວດກູ້ ແລະ ການໂຄສະນາສຶກສາຄວາມສ່ຽງກ່ຽວກັບລະເບີດບໍ່ທັນແຕກໃຫ້ແກ່ຊຸມຊົນ ແລະ ການສໍາຫຼວດ ພ້ອມກັນກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ໂດຍສະເພາະໃນບັນດາແຂວງທີ່ໄດ້ຮັບຜົນກະທົບໜັກໜ່ວງທີ່ສຸດ.

"*ພວກເຮົາຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງຍິ່ງຕໍ່ກັບຄູ່ຮ່ວມພັດທະນາທັງໝົດ ທີ່ໄດ້ປະກອບສ່ວນ ແລະ ສືບຕໍ່ປະກອບສ່ວນໃນວຽກງານດັ່ງກ່າວໂດຍຜ່ານທາງທະວິພາຄີ ຫຼື ຜ່ານທາງອົງການຢູເອັນດີພີ. ເຖິງເວລາທີ່ພວກເຮົາຈະຕ້ອງຄິດຄົ້ນນໍາໃຊ້ວິທີການໃໝ່ໆ ໂດຍພິຈາລະນາບໍ່ພຽງແຕ່ນໍາໃຊ້ເຕັກໂນໂລຊີໃໝ່ໆ ແຕ່ຍັງລວມເຖິງແຫຼ່ງທຶນໃໝ່ໆນໍາອີກ. ພວກເຮົາຄວນຍົກໃຫ້ເຫັນບັນຫາລະເບີດບໍ່ທັນແຕກໃນ ສປປ ລາວ ໂດຍການນໍາໃຊ້ເຕັກໂນໂລຊີດີຈີຕໍໃໝ່ໆ ເພື່ອລະດົມທຶນຈາກສາທາລະນະ*", ກ່າວໂດຍ **ທ່ານ ຮາວລຽງ ຊູ, ຜູ້ຊ່ວຍເລຂາທິການໃຫຍ່ ສປຊ, ຜູ້ຊ່ວຍຜູ້ບໍລິຫານ ແລະ ເອກອະທິບໍດີປະຈໍາພາກພື້ນອາຊີ ແລະ ປາຊີຟິກ ແຫ່ງອົງການສະຫະປະຊາຊາດ ເພື່ອການພັດທະນາ.**

ງານດັ່ງກ່າວໄດ້ປູກຈິດສໍານຶກໃຫ້ຜູ້ເຂົ້າຮ່ວມກ່ຽວກັບສິ່ງທ້າທາຍ ແລະ ກາລະໂອກາດ ສໍາລັບຂະແໜງການລະເບີດບໍ່ທັນແຕກ ແລະ ຊຸກຍູ້ການຮ່ວມມື ແລະ ການສະໜອງທຶນໃນຕໍ່ໜ້າ.

ລັດຖະບານແຫ່ງ ສປປ ລາວ ແລະ ຄູ່ຮ່ວມພັດທະນາ ເຊື່ອໝັ້ນວ່າ ການປະກອບສ່ວນຕໍ່ການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ເປົ້າໝາຍທີ 18 ສາມາດສົ່ງກະທົບທາງບວກຕໍ່ກັບວາລະການພັດທະນາ ເຊິ່ງນໍາໄປສູ່ຄວາມສໍາເລັດຂອງເປົ້າໝາຍການພັດທະນາອື່ນໆ ພ້ອມກັບການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນອະນາຄົດ.

**ຕິດຕໍ່**
**ທ່ານ ສຸລິກອນ ຊາມຸນຕີ**
*ຮອງພະແນກຄວາມໝັ້ນຄົງ ແລະ ການເມືອງແຫ່ງ ສປຊ*
ກົມອົງການຈັດຕັ້ງສາກົນ
ກະຊວງການຕ່າງປະເທດແຫ່ງ ສປປ ລາວ
ໂທ: +856 21 414025
k.samounty@gmail.com

**ສົມລິດ ຄູນປະເສີດ**
ຜູ້ຊ່ວຍວຽກສື່ສານ, ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈໍາ ສປປ ລາວ
ໂທ: +856 21 267 751, +856 20 777 118 74
somlith.khounpaseuth@undp.org